Charles Sturt University

Gulbali Institute
Agriculture Water Environment

# ຫຼັກສູດປະກາດນິຍະບັດບັນດິດ ດ້ານການອະນຸລັກ ແລະ ການຄຸ້ມຄອງປາ

## ໂຄງການທຶນການສຶກສາ

## ສ້າງຄວາມເຂັ້ມແຂງດ້ານຄວາມເປັນຜູ້ນຳ ໃນການຄຸ້ມຄອງແມ່ນ້ຳແບບຍືນຍົງ

ຫຼັກສູດປະກາສະນິຍະບັດຊັ້ນສູງ ສາຂາການອະນຸລັກ ແລະ ຄຸ້ມຄອງປາ ເປັນການຍົກລະດັບຄວາມຮູ້ ແລະ ທັກສະພາກປະຕິບັດຕົວຈິງດ້ານການປະມົງແບບຍືນຍົງ, ນິເວດວິທະຍາສັດນ້ຳ ແລະ ການຄຸ້ມຄອງແມ່ນ້ຳ ສູ່ລະດັບກ້າວໜ້າຂັ້ນສູງ. ຫຼັກສູດນີ້ຈະຊ່ວຍກຽມຄວາມພ້ອມໃຫ້ແກ່ບັນດາວິຊາການຜູ້ເປັນມືອາຊີບ ໃນການຮັບມືກັບບັນຫາການອະນຸລັກຊີວະນາໆພັນ, ການປັບຕົວຕໍ່ການປ່ຽນແປງດິນຟ້າອາກາດ ແລະ ສິ່ງທ້າທາຍຕ່າງໆກ່ຽວກັບທາງຜ່ານປາໃນລະບົບແຫຼ່ງນ້ຳທີ່ຊັບຊ້ອນ. ຜູ້ຮັບທຶນຈະໄດ້ສຶກສາຢູ່ທີ່ວິທະຍາເຂດ ອານເບີຣີ-ວູດ໋ອງກ່າ (Albury-Wodonga) ຂອງມະຫາວິທະຍາໄລ ຊານ ສະເຕີ (Charles Sturt) ຕະຫຼອດໄລຍະເວລາ 16 ອາທິດຂອງໂຄງການ, ຊຶ່ງຈະສາມາດເຂົ້າເຖິງສິ່ງອຳນວຍຄວາມສະດວກທີ່ທັນສະໄໝ, ຫ້ອງຮຽນທີ່ສອນໂດຍຜູ້ຊ່ຽວຊານ ແລະ ສະພາບແວດລ້ອມການຮຽນຮູ້ແບບມີສ່ວນຮ່ວມ ທີ່ຕັ້ງຢູ່ໃກ້ກັບລະບົບແມ່ນ້ຳທີ່ສຳຄັນຕ່າງໆ ເພື່ອສະດວກໃນການລົງພາກສະໜາມ ແລະ ທັດສະນະສຶກສາຕົວຈິງ.

## ຜົນປະໂຫຍດດ້ານທຶນການສຶກສາ

ລາຄາ: $30,000 ໂດລ່າສະຫະລັດ ແລະ ລວມມີ

- ຄ່າຮຽນທັງໝົດ
- ຄ່າທີ່ພັກເຊົ່າ
- ຄ່າປີ້ຍົນໄປ-ກັບ ເມືອງ ອານເບີຣີ (Albury)
- ຄ່າອັດຕາກິນ
- ຄ່າປະກັນສຸຂະພາບ
- ຄ່າທຳນຽມວີຊາ

**ທຶນການສຶກສາ ທີ່ຄອບຄຸມຄ່າໃຊ້ຈ່າຍທັງໝົດ**



## ສ້າງຄວາມອາດສາມາດທາງດ້ານວິຊາການໃນມືນີ້ ເພື່ອການປະຕິບັດງານແບບເຂັ້ມແຂງໃນອະນາຄົດ

ການຊຸກຍູ້ໃຫ້ວິສະວະກອນ, ຜູ້ຄຸ້ມຄອງຊັບພະຍາກອນນ້ຳ ແລະ ຊ່ຽວຊານດ້ານນະໂຍບາຍ ເຂົ້າຮ່ວມໃນຫຼັກສູດປະກາສະນິຍະບັດຊັ້ນສູງ ສາຂາການອະນຸລັກ ແລະ ຄຸ້ມຄອງປາ ຈະຊ່ວຍສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງຕ່າງໆ ໃນການອອກແບບ ແລະ ປະເມີນຜົນລະບົບເຄື່ອງພະລັງງານໄຟຟ້າ ທີ່ເປັນມິດກັບປາ ແລະ ທົນທານຕໍ່ການປ່ຽນແປງດິນຟ້າອາກາດ ພ້ອມທັງສອດຄ່ອງກັບລະບຽບການ, ຫຼຸດຜ່ອນຄວາມຈຳເປັນໃນການແກ້ໄຂການອອກແບບຄືນໃໝ່ໃນພາຍຫຼັງ ແລະ ສະໜັບສະໜູນການພັດທະນາໂຄງລ່າງພື້ນຖານດ້ານແຫຼ່ງນ້ຳແບບຍືນຍົງ ທີ່ອີງໃສ່ຫຼັກຖານຕົວຈິງ.

# ຄວາມຊ່ຽວຊານດ້ານການຄຸ້ມຄອງແມ່ນ້ຳ ແລະ ປາ ແບບເຊື່ອມສານມີຄວາມຈຳເປັນຮີບດ່ວນ

ການລົງທຶນໃນຂະແໜງພະລັງງານໄຟຟ້ານ້ຳຕົກ ແລະ ແມ່ນ້ຳ ມັກຈະສວນທາງກັບຂໍ້ຈຳກັດດ້ານຄວາມຊ່ຽວຊານພາຍໃນ, ຊຶ່ງເຮັດໃຫ້ຈຳເປັນຕ້ອງເອື່ອຍອີງໃສ່ທີ່ປຶກສາຈາກພາຍນອກ ແລະ ເຮັດໃຫ້ຈຳກັດການພັດທະນາອົງຄວາມຮູ້ຂອງອົງການຈັດຕັ້ງ ພ້ອມທັງຄວາມສາມາດໃນການຄຸ້ມຄອງ.

ຂາດກຳລັງບຸກຄະລາກອນສືບທອດໃນອະນາຄົດ. ຫາກປາສະຈາກຜູ້ຊ່ຽວຊານທີ່ໄດ້ຮັບການຝຶກອົບຮົມທາງດ້ານການອອກແບບທີ່ເປັນມິດກັບປາ ແລະ ທົນທານຕໍ່ການປ່ຽນແປງດິນຟ້າອາກາດ, ບັນດາອົງການຈັດຕັ້ງຕ່າງໆຈະປະເຊີນກັບຄວາມສ່ຽງກໍຄືຂໍ້ຈຳກັດດ້ານຄວາມສາມາດໃນການສິດສອນ, ປະສິດທິຜົນຂອງການຄົ້ນຄວ້າຫຼຸດລົງ ແລະ ການປະກອບສ່ວນເຂົ້າໃນນະໂຍບາຍ ແລະ ການການຄຸ້ມຄອງແຫຼ່ງນ້ຳແບບຍືນຍົງທີ່ຈຳກັດ.

ການປ່ຽນແປງດິນຟ້າອາກາດເຮັດໃຫ້ຄວາມສ່ຽງຕໍ່ລະບົບຮ້າຍແຮງຂຶ້ນ. ຄວາມແປປວນທາງດ້ານອຸທົກກະສາດທີ່ນັບມື້ນັບເພີ່ມຂຶ້ນ ໄດ້ສ້າງຄວາມກົດດັນຕໍ່ໂຄງລ່າງພື້ນຖານຂອງແມ່ນ້ຳ, ເຮັດໃຫ້ປະສິດທິພາບຂອງລະບົບຫຼຸດລົງ ແລະ ຊີ້ໃຫ້ເຫັນເຖິງຄວາມຈຳເປັນໃນການສ້າງຂອບນະໂຍບາຍ ແລະ ການອອກແບບທີ່ສາມາດປັບຕົວໄດ້ ພ້ອມທັງອີງໃສ່ຫຼັກຖານຕົວຈິງ.

## ຂໍ້ຈຳກັດທາງດ້ານຄວາມຊຳນິຊຳນານ ຈະນຳໄປສູ່ບັນຫາຢ່າງຕໍ່ເນື່ອງແບບທັບຊ້ອນກັນ

ມູນຄ່າຕົ້ນທຶນ ຂອງ ໂຄງການ ເພີ່ມຂຶ້ນ ແລະ ຊັກຊ້າ

- ຂໍ້ຈຳກັດດ້ານຄວາມສາມາດພາຍໃນອົງກອນ ແລະ ການເອື່ອຍອີງໃສ່ພາຍນອກ ສາມາດນຳໄປສູ່ການອອກແບບທີ່ຂາດຄວາມເປັນເອກະພາບ, ການປັບປຸງແກ້ໄຂຊ້ຳແລ້ວຊ້ຳອີກ ແລະ ຄວາມຊັກຊ້າໃນການຄົ້ນຄວ້າປະຍຸກ, ຊຶ່ງເປັນສິ່ງກີດກັ້ນຕໍ່ກັບການນຳໃຊ້ນະວັດຕະກຳໃໝ່ ແລະ ຄວາມສາມາດໃນການສິດສອນ.

ຄວາມບອບບາງດ້ານລະບຽບການ ແລະ ການປະຕິບັດສອດຄ່ອງ

- ການເຊື່ອມສານຂອບວຽກງານທາງຜ່ານປາ ແລະ ການປັບຕົວຕໍ່ກັບການປ່ຽນແປງດິນຟ້າອາກາດ ເຂົ້າໃນລະບົບວິສະວະກຳ ແລະ ຊົນລະປະທານ ສາມາດເຮັດໃຫ້ໂຄງການຕ່າງໆ ບໍ່ສອດຄ່ອງກັບນະໂຍບາຍດ້ານສິ່ງແວດລ້ອມ ແລະ ມາດຕະຖານລະບຽບການ ຊຶ່ງເຮັດໃຫ້ຄວາມໜ້າເຊື່ອຖືຕໍ່ກັບວິຊາການ ແລະ ປະສິດທິຜົນທາງດ້ານນະໂຍບາຍຫຼຸດລົງ.

ຄວາມສ່ຽງ ຕໍ່ກັບຊື່ສຽງ ແລະ ດ້ານຄວາມເຊື່ອໝັ້ນຊຸມຊົນ

- ຄວາມລົ້ມເຫຼວໃນແກ້ໄຂບັນຫາການເຊື່ອມຈອດດ້ານລະບົບນິເວດ ແລະ ຜົນກະທົບທາງສັງຄົມ ອາດກໍ່ໃຫ້ເກີດຄວາມກັງວົນຈາກຊຸມຊົນ ແລະ ອົງການຈັດຕັ້ງສັງຄົມ, ຊຶ່ງຈະເຮັດໃຫ້ຄວາມເຊື່ອໝັ້ນຕໍ່ກັບອົງການຈັດຕັ້ງຫຼຸດລົງ ແລະ ເຮັດໃຫ້ເກີດໂອກາດໃນການຮ່ວມມືເພື່ອການຄົ້ນຄ້ວາວິໄຈໜ້ອຍລົງ.

ຂໍ້ຈຳກັດດ້ານການດຳເນີນງານ ແລະ ລະບົບ

- ຄວາມແປປວນທາງດ້ານອຸທົກກະສາດທີ່ເກີດຈາກສະພາບການປ່ຽນແປງດິນຟ້າອາກາດ ໄດ້ສ້າງສິ່ງທ້າທາຍຕໍ່ຮູບແບບໂຄງລ່າງພື້ນຖານແບບດັ້ງເດີມ; ຫາກປາສະຈາກຄວາມອາດສາມາດແບບສະຫະວິຊາຊີບ, ບັນດາອົງການຈັດຕັ້ງຈະປະເຊີນໜ້າກັບຄວາມຫຍຸ້ງຍາກໃນການພັດທະນາຂອບລະບຽບການອອກແບບທີ່ມີຄວາມທົນທານ ແລະ ອີງໃສ່ຫຼັກຖານຕົວຈິງ.

ການຂາດກາລະໂອກາດໃນການລະດົມທຶນເພື່ອສ້າງນະໂຍບາຍ ແລະ ດຳເນີນການຄົ້ນຄ້ວາວິໄຈ

- ການມີສ່ວນຮ່ວມແບບຈຳກັດໃນການຄຸ້ມຄອງ ແລະ ການພັດທະນາຂີດຄວາມສາມາດແບບເຊື່ອມສານ ສາມາດຈຳກັດການເຂົ້າເຖິງໂອກາດໃນການເປັນຄູ່ຮ່ວມງານ, ແຫຼ່ງທຶນທີ່ມີການແຂ່ງຂັນ ແລະ ບົດບາດໃນການເປັນທີ່ປຶກສາດ້ານນະໂຍບາຍທີ່ສຳຄັນ.

ຖ້າການແກ້ໄຂບັນດາສິ່ງທ້າທາຍເຫຼົ່ານີ້ມີຄວາມສຳຄັນຢ່າງຍິ່ງ ຖ້າຕ້ອງການສ້າງຄວາມເຂັ້ມແຂງດ້ານຂີດຄວາມສາມາດ, ຍົກລະດັບຄວາມສອດຄ່ອງທາງດ້ານລະບຽບການ, ຮັກສາຄວາມເຊື່ອໝັ້ນຂອງຊຸມຊົນ ແລະ ຊຸກຍູ້ຄວາມເປັນຜູ້ນຳດ້ານການຄົ້ນຄວ້າໃນໄລຍະຍາວ ເພື່ອສົ່ງເສີມລະບົບແມ່ນ້ຳ ແລະ ພື້ນຖານໂຄງລ່າງນ້ຳທີ່ມີຄວາມທົນທານຕໍ່ກັບການປ່ຽນແປງດິນຟ້າອາກາດ.

Charles Sturt University

Gulbali Institute
Agriculture Water Environment

ຖ້າມີຄຳຖາມ ກະລຸນາສົ່ງອີເມວຫາພວກເຮົາ.

→ gulbali@csu.edu.au

ມະຫາວິທະຍາໄລ Charles Sturt - ລະຫັດຜູ້ໃຫ້ບໍລິການ TEQSA: PRV12018 (ມະຫາວິທະຍາໄລອົດສະຕຣາລີ). ຜູ້ໃຫ້ບໍລິການ CRICOS: 00005F.
ຫຼັກສູດ CRICOS: 0101018.